# ບົດທີ 23

# ເຫດທີ່ພະເຢຊູຕ້ອງຕາຍ (ພາກຕົ້ນ)




**1** ກ. ເຮົາຈະເບິ່ງຄວາມຕາຍຂອງພະເຢຊູຈາກ 4 ແງ່ກໍໄດ້. ໃນຮູບ 4 ໃບນີ້ ແມ່ນຮູບໃດທີ່ສະແດງເຖິງການ ໄຊຊະນະຂອງພະອົງທີ່ໄມ້ກາງແຂນ? ____________________

ຂ. ແມ່ນໃຜໄຊຊະນະທີ່ໄມ້ກາງແຂນ? ____________________

**2** ໃຫ້ອ່ານໂກໂລຊາຍ 2:15

ກ. ໃນຂໍ້ພະຄຳພີນັ້ນ ພະອົງຊະນະໃຜ? ____________________

ຂ. ຊະນະຢ່າງໃດ? ____________________

**3** ເພື່ອຈະເຂົ້າໃຈຄວາມໝາຍໃນ ກລຊ 2:15 ດີໆເຮົາຕ້ອງຮຽນຮູ້ກ່ຽວກັບປະເພນີຂອງຊາດໂລມໃນສະໄໝນັ້ນ. ເທື່ອ ໃດທີ່ກອງທັບທະຫານໂລມຊະນະໃນການຕໍ່ສູ້ ເຂົາຈັບເອົາຊະເລີຍເສິກກັບມາເດີນເປັນຂະບວນສະແດງຕໍ່ໜ້າປະຊາຊົນໃນກຸງໂລມ.
ເຮົາເຫັນຮູບຂະບວນການນັ້ນຢູ່ໜ້າປົກບົດທີ 12 ໃນຫຼັກສູດນີ້ (ໜ້າ 126) ໃນຮູບນັ້ນນັກຮົບທະຫານເອົາເຄື່ອງທີ່ເຮັດດ້ວຍຄຳມາສະແດງໃນປີ ຄ.ສ.70. ທີ່ພະເຢຊູ "ປະຈານຜູ້ປົກຄອງ ແລະອຳນາດຢ່າງເປີດເຜີຍ ໂດຍນຳເຂົາເປັນຊະເລີຍໃນຂະບວນແຫ່ງໄຊຊະນະຂອງພະອົງ" ເຂົ້າກັບປະເພນີຂອງໂລມ. ພະເຢຊູຊະນະເຂົາໃນເຫດການໃດ? ___________________

**4** ແມ່ນໃຜປຽບທຽບກັບຊະເລີຍເສິກນັ້ນ? (ເລືອກ)
ກ. ທະຫານໂລມ ຂ. ຜູ້ນຳໃນສາດສະໜາຢິວ
ຄ. ຜູ້ປົກຄອງແລະອຳນາດທັງຫຼາຍ

**5** ກ. ພະເຢຊູເຮັດຫຍັງໃຫ້ສຳເລັດທີ່ໄມ້ກາງແຂນ? ________________________________
ຂ. ຊະນະເໜືອຜູ້ _______________ ແລະ _______________ ທັງຫຼາຍ. (ຕື່ມຄວາມທີ່ຂາດ)

**6** ໃຫ້ອ່ານ ເຮັບເຣີ 2:14 ແລ້ວຕື່ມຄວາມທີ່ຂາດ ເຫດສັນນັ້ນເພາະພວກລູກໄດ້ຮ່ວມຊາດມະນຸດອັນດຽວກັນ ຝ່າຍພະອົງ ຈຶ່ງໄດ້ຊົງຮ່ວມຊາດມະນຸດເໝືອນກັນໂດຍທາງ ______________ ນັ້ນພະອົງຈະໄດ້ຊົງ ____________ ຜູ້ທີ່ມີອຳ ນາດແຫ່ງຄວາມຕາຍຄື ______________ .

**7** ພະເຢຊູທຳລາຍອຳນາດຂອງພະຍາມານໂດຍເຫດການໃດ? ______________________

**8** ກ. ______________________________ ຊົງໄຊຊະນະທີ່ໄມ້ກາງແຂນ. (ຕື່ມຄວາມຂາດ)
ຂ. ໄຊຊະນະເໜືອໃຜ? ________________________________________________
ຄ. ເພາະເຫດນັ້ນ ຜູ້ທີ່ໄວ້ວາງໃຈໃນພະເຢຊູບໍ່ຕ້ອງຢ້ານຜີຮ້າຍ ເພາະອຳນາດຂອງມານຈຳກັດໄວ້ດ້ວຍອຳນາດໃຜ? ______________________________________________
ງ. ແລະພະເຢຊູຊະນະມານໃນບ່ອນໃດ? ____________________________________

**9** ໃນສະໄໝພະຄຳພີໃໝ່ພວກຄົນໂລມເຄີຍຊື້ແລະຂາຍທາດເປັນຊັບສິນບັດ. ໃຫ້ທ່ານເບິ່ງໜ້າປົກບົດ23 ນີ້
ກ. ຮູບໃດສະແດງເຖິງການຊື້ແລະຂາຍທາດ? ________________________________
ຂ. ພະເຢຊູໄຖ່ເຮົາຄືນຈາກການເປັນທາດດ້ານວິນຍານໂດຍເຫດການໃດ? ____________

**10** ພະເຢຊູຕາຍທີ່ໄມ້ກາງແຂນເພື່ອໄຖ່ເຮົາໃຫ້ພົ້ນຈາກການຫຍັງ? ____________________

**11** ເຮົາຮຽນມາແລ້ວເລື່ອງລາຊະກິດຂອງພະອົງທີ່ໄມ້ກາງແຂນ ສອງປະການໃດ? (ຕື່ມຄວາມ)
ກ. ພະອົງຊະນະ ______________________________________________ .
ຂ. ພະອົງໄຖ່ເຮົາໃຫ້ພົ້ນຈາກ ________________________________________ .

**12** ໃນສະໄໝພະເຢຊູຢູ່ໃນໂລກນີ້ ມີຫຼາຍຄົນທີ່ເປັນຂ້ອຍເປັນທາດ. ເຂົາບໍ່ມີເອກະລາດໃນຕົນເອງ ແຕ່ເປັນຊັບສິນ ບັດຂອງນາຍເຂົາ. ເຂົາເຮັດວຽກໜັກແຕ່ບໍ່ໄດ້ຮັບຄ່າຈ້າງເຂົາບໍ່ມີສິດຫຍັງທີ່ຈະຕິເລື່ອງການກົດຂີ່ຂົ່ມເຫັງ. ເຂົາມີແຕ່ຫວັງວ່າຈະມີຄົນໜຶ່ງຄົນໃດທີ່ຈະມາເສຍຄ່າຊື້ເຂົາຄືນຈາກນາຍເຂົາ. ຖ້າຄົນໃດຈະໄຖ່ເຂົາຄືນໂດຍລາຄາ ແພງເຂົາຈະເປັນຄົນທີ່ມີເສລີພາບຕໍ່ໄປໄດ້.

ຜູ້ໃດທີ່ເປັນທາດເຂົາມີຄວາມຫວັງວ່າຢ່າງໃດ? ______________________________

**13** ໃຫ້ອ່ານໂຢຮັນ 8:34 ຜູ້ທີ່ເຄີຍເຮັດການຜິດບາບກໍເປັນຂ້ອຍຂ້າຫຍັງ? ______________

**14** ຖ້າຢ່າງນັ້ນແມ່ນຄົນໃດທີ່ເປັນຂ້ອຍຂ້າຄວາມບາບ? (ເລືອກ)

ກ. ທຸກຄົນ ຂ. ບໍ່ເປັນຈັກຄົນ ຄ. ແຕ່ສະເພາະຄົນທີ່ຖືຜີ

**15** ໃນມທ 20:28 ພະເຢຊູປະທານຊີວິດຂອງຕົນໃຫ້ເປັນຫຍັງ? ______________________

**16** ໃຫ້ອ່ານ 1 ເປໂຕ 1:18-19

ກ. ພະອົງບໍ່ໄຖ່ເຮົາໄວ້ດ້ວຍສິ່ງໃດ? ______________________________________

ຂ. ຊົງໄຖ່ດ້ວຍຫຍັງ? ______________________________________________

ຄ. ເໝືອນດັ່ງເລືອດຫຍັງ? ____________________________________________

**17** ຄຳວ່າ “ໂລຫິດຂອງພະຄຼິດ” ອ້າງເຖິງຫຍັງ? (ເລືອກ)

ກ. ພະກຳເນີດ ຂ. ການສິ້ນພະຊົນ ຄ. ການຄືນພະຊົນ

**18** ກ. ຖ້າພະເຢຊູບໍ່ໄດ້ໄຖ່ເຮົາຄືນ ເຮົາຈະຢູ່ໃນສະພາບໃດ? ________________________

ຂ. ພະອົງໄຖ່ເຮົາໄວ້ດ້ວຍຄ່າຫຍັງ? ______________________________________

**19** ກ. ພະເຢຊູໄຖ່ເຮົາໃຫ້ພົ້ນຈາກສະພາບໃດ? _________________________________

ຂ. ເມື່ອເຮົາເປັນທາດຂອງຄວາມບາບ ພະອົງເຮັດຫຍັງຊ່ວຍເຮົາ? _________________

**20** ກ. ໃນໂລມ 6:17 ເຫັນວ່າເຮົາເຄີຍເປັນທາດຫຍັງ? ______________________________

ຂ. ໃນຂໍ້ຕໍ່ໄປຄື ໂລມ 6:18 ເຫັນວ່າຄົນທີ່ໄດ້ພົ້ນແລ້ວ ກາຍເປັນຂ້ອຍຂ້າຫຍັງ?

_______________________________________________________________

**21** ກ. ຜູ້ທີ່ໄດ້ລອດພົ້ນຈາກຄວາມຜິດບາບ ໄດ້ຮັບເສລີພາບຈາກຫຍັງ?

_______________________________________________________________

ຂ. ກັບມາເປັນຂ້ອຍຂ້າຫຍັງ? (ໂລມ 6:18)

_______________________________________________________________

**22** ເຖິງວ່າຄຣິດສະຕຽນ ບໍ່ແມ່ນທາດຂອງຄວາມບາບຕໍ່ໄປກໍຕາມ ແຕ່ຍັງຈະມີນາຍຢູ່ ບໍ່ແມ່ນວ່າເຮົາຈະມີສິດເຮັດຕາມໃຈ. ໃຫ້ອ່ານ ຕິໂຕ 2:14

ກ. ພະເຢຊູສະຫຼະຊີວິດແທນເຮົາ ເພື່ອໃຫ້ເປັນພົນລະເມືອງຂອງໃຜ? ______________________________

ຂ. ຄຣິດສະຕຽນມີນາຍໃໝ່ຄືໃຜ?

______________________________________

ຄ. ພະເຢຊູເສຍຄ່າຫຍັງຈິ່ງຈະເປັນນາຍໃໝ່ໄດ້?

______________________________________



**23** ໃນ ຕິໂຕ 2:14 ເຮົາຄວນເປັນຄົນໃຈຮ້ອນຮົນສຳລັບຫຍັງ?

______________________________________

**24** ໃຫ້ອ່ານ 1 ໂກລິນໂທ 6:19-20

ກ. ຄຣິດສະຕຽນເປັນເຈົ້າຂອງຕົນເອງບໍ່? ______________________________

ຂ. ໃຜເປັນເຈົ້າຂອງເຮົາ? ______________________________

ຄ. ໃນ 1 ກລທ 6:20 ເຫັນວ່າພະເຈົ້າຊື້ເຮົາໄວ້ດ້ວຍລາຄາໃດ? ________________

ງ. ພະຄຳພີສອນວ່າ ພະເຈົ້າໄຖ່ເຮົາໄວ້ດ້ວຍຫຍັງ? ______________________

ຈ. ໃນ 1 ກລທ 6:20 ເຮົາຄວນຖະຫວາຍພະກຽດໃຫ້ໃຜ? ____________________

ສ. ຖະຫວາຍດ້ວຍຫຍັງ? ______________________________

**25** ກ. ນອກຈາກພະເຈົ້າຈະໄຖ່ເຮົາຄືນ ເຮົາຈະເປັນທາດຫຍັງ? ____________________

ຂ. ຫຼັງຈາກໄຖ່ຄືນແລ້ວເຮົາມີເສລີພາບຈາກຫຍັງ? ______________________

ຄ. ນາຍໃໝ່ຂອງເຮົາຄືໃຜ? ______________________________

ງ. ເຮົາມີພາລະຢ່າງໃດຕໍ່ນາຍໃໝ່ນັ້ນ? (ເລືອກ)

_____ ຮັບໃຊ້ພະອົງກໍໄດ້ ບໍ່ຮັບກໍໄດ້

_____ ບໍ່ມີຂໍ້ຜູກມັດຈັກປະການ

_____ ຕ້ອງຮັບໃຊ້ພະອົງ.

**26** ເປັນຫຍັງເຮົາຈິ່ງຮັບໃຊ້ພະອົງ? (ເລືອກ)

ກ. ພະອົງໄຖ່ເຮົາໄວ້ແລ້ວ ພະອົງເປັນເຈົ້າຂອງເຮົາແລ້ວ

ຂ. ເພາະການຮັບໃຊ້ພະອົງເປັນວຽກເບົາ

ຄ. ເພາະເຮົາຕ້ອງເຮັດບຸນຈິ່ງຈະໄດ້ລອດພົ້ນ

**27** ກ. ພະເຢຊູໄຖ່ເຮົາຄືນແລ້ວເຮົາຈິ່ງມີຂໍ້ຜູກມັດຈາກພະອົງປະການໃດ? ______________

ຂ. ເຮົາຮຽນມາແລ້ວກ່ຽວກັບການເປັນຂ້ອຍຂ້າ ການໄຖ່ຄືນໃຫ້ພົ້ນແລະການມີເຈົ້າຂອງ. ໃຫ້ສະຫລູບເລື່ອງນັ້ນມາ (ຕື່ມຄວາມທີ່ຂາດ)
ທີ່ພະເຢຊູຕາຍທີ່ໄມ້ກາງແຂນພະອົງຊົງ _______ ເຮົາຄືນຈາກການເປັນ ___________ ຂອງຄວາມບາບ.

**28** ລາຊະກິດທີ່ພະອົງເຮັດໃຫ້ສຳເລັດມີ 2 ປະການທີ່ເຮົາຮຽນມາແລ້ວ. (ຕື່ມຄວາມຕໍ່ໄປນີ້)
ກ. ພະອົງໄຊ ___________________________________________
ຂ. ພະອົງໄຖ່ ___________________________________________

**29** ຍັງມີແງ່ທີສາມໃນຄວາມຕາຍຂອງພະອົງ. ໃນສະໄໝພະຄຳພີເດີມພວກປະໂລຫິດເຄີຍຖະຫວາຍສັດບູຊາຢູ່ເລື້ອຍໆ.
ກ. ໃຫ້ທ່ານເປີດເບິ່ງໜ້າປົກບົດນີ້ອີກ ແມ່ນຮູບໃດທີ່ສະແດງເຖິງການບູຊານັ້ນ? ________
ຂ. ໃນພະຄຳພີໃໝ່ເຫັນວ່າການຖວາຍຕົວເປັນເຄື່ອງຫຍັງ? ______________________

**30** ພະເຢຊູ ______________________ ຕົວເປັນເຄື່ອງບູຊາທີ່ໄມ້ກາງແຂນ. (ຕື່ມຄວາມຂາດ)

**31** ມາເຖິງນີ້ ເຮົາຮຽນເລື່ອງຄວາມຕາຍຂອງພະອົງຈາກ 3 ແງ່ຄື: (ຕື່ມຄວາມຂາດ)
ກ. ພະອົງ __________________________________
ຂ. ພະອົງ __________________________________
ງ. ພະອົງ ______________ ຕົວເປັນເຄື່ອງ ________



**32** ລະບົບການບູຊາໃນພະຄຳພີເດີມ ຖືຫຼັກສຳຄັນ 3 ປະການຄື:
* ໂທດຂອງຄວາມບາບຄືຄວາມຕາຍ
* ທີ່ຈະໃຫ້ຜູ້ອື່ນຕາຍແທນກໍເປັນໄປໄດ້
* ເລືອດຂອງຜູ້ຕາຍແທນນັ້ນ ເປັນສັນຍາລັກທີ່ຈະຖະຫວາຍໃຫ້ພະເຈົ້າ

ໃຫ້ອ່ານເຮັບເລີ 9:22 ເພິ່ນຂຽນເລື່ອງລະບົບໃນສະໄໝພະຄຳພີເດີມວ່າ ຖ້າບໍ່ມີເລືອດໄຫຼອອກແລ້ວ ຈະບໍ່ມີຫຍັງ? ______________________



**33** ຕາມໃນເຮັບເລີ 10:4 ທີ່ຈິງເລືອດຂອງສັດເຫຼົ່ານັ້ນ ຈະສາມາດຊຳລະບາບໄດ້ບໍ່? ________

**34** ເຖິງວ່າເຂົາຖະຫວາຍສັດຫຼາຍປານໃດກໍຕາມ ແຕ່ສັດນັ້ນຕາຍແທນບາບຂອງຄົນບໍ່ໄດ້. ການນັ້ນມີແຕ່ຊີ້ບອກເຖິງເຄື່ອງ ບູຊາຢ່າງສົມບູນໃນພາຍໜ້ານັ້ນຄື ອົງພະເຢຊູຄຣິດ.
ໃຫ້ອ່ານໂຢຮັນ 1:29 ແມ່ນໃຜທີ່ຮັບເອົາຄວາມຜິດບາບຂອງມະນຸດສະໂລກ? _________

**35** ໃຫ້ອ່ານເຮັບເລີ 9:26 ແລ້ວຕື່ມຄວາມທີ່ຂາດ. "... ແຕ່ໃນຄາວທີ່ສຸດນີ້ ພະອົງໄດ້ຊົງປາກົດເພື່ອຖະຫວາຍ ________________ ເປັນເຄື່ອງບູຊາ ເພື່ອລົບລ້າງບາບ ເປັນການສິ້ນສຸດ."

**36** ເຮົາໄດ້ລອດໂດຍເຄື່ອງບູຊາສົມບູນແລະແທ້ຈິງຢ່າງໃດ? (ເລືອກ)
ກ. ສັດບູຊາໃນພະຄຳພີເດີມ ຂ. ພະເຢຊູເອງ ຄ. ບຸນຄຸນຂອງສິ່ງສັກສິດທັງປວງ

**37** ກ. ໃນເຮັບເລີ 9:26 ພະເຢຊູຖະຫວາຍພະອົງເອງເປັນເຄື່ອງບູຊາຈັກເທື່ອ? ___________
ຂ. ເພື່ອລຶບລ້າງບາບເປັນການ ____________________________ . (ຕື່ມຄວາມທີ່ຂາດ)

**38** ໃຫ້ອ່ານ ເຮັບເລີ 10:12 ພະອົງໄປປະທັບຢູ່ໃສ? ______________________________

**39** ທີ່ພະເຢຊູໄປຢູ່ເບື້ອງຂວາຂອງພະເຈົ້າມີເນື້ອຄວາມຢ່າງໃດ? (ເລືອກ)
ກ. ລາຊະກິດຂອງພະອົງສຳເລັດແລ້ວ ຂ. ພະອົງເມື່ອຍຫຼາຍ
ຄ. ລາຊະກິດຍັງບໍ່ທັນສຳເລັດ

**40** ຖ້າແມ່ນແຕ່ພະອົງປະທັບເບື້ອງຂວາຂອງພະເຈົ້າໝາຍຄວາມວ່າຢ່າງໃດ? (ເລືອກ)
ກ. ຍັງມີອີກກ່ອນທີ່ເຮົາຈະໄດ້ຮັບລອດພົ້ນຢ່າງບໍລິບູນ
ຂ. ພະອົງຍົກຄວາມລອດພົ້ນໃຫ້ ແຕ່ບໍ່ເຕັມສ່ວນ
ຄ. ພະອົງຍົກຄວາມລອດພົ້ນຢ່າງສຳເລັດໃຫ້ໄດ້ແລ້ວ

**41** ພະອົງຖະຫວາຍຕົວເປັນເຄື່ອງບູຊາທີ່ໄມ້ກາງແຂນ ເພື່ອຈະຍົກຄວາມລອດເຖິງຂະ ນາດໃດໃຫ້ແກ່ເຮົາ? ______________________________________________________

**42** ເມື່ອພະເຢຊູຈະຕາຍທີ່ໄມ້ກາງແຂນ ພະອົງເວົ້າຄວາມໃດທີ່ສະແດງວ່າລາຊະກິດຂອງພະອົງຄົບຖ້ວນແລ້ວ (ອ່ານ ໂຢຮັນ 19:30) ____________________________________

**43** ຕັ້ງແຕ່ພະເຢຊູໄຖ່ເຮົາໃຫ້ໄດ້ລອດພົ້ນແລ້ວ ເຮົາມີການຜູກມັດຢ່າງໃດຕໍ່ພະອົງ?
____________________________________________________________

**44** ພະຄຳພີໃໝ່ສອນວ່າພະເຢຊູໄດ້ຖະຫວາຍຕົວເປັນເຄື່ອງບູຊາເປັນການສິ້ນສຸດພະອົງຈຶ່ງຍົກຫຍັງໃຫ້ເຮົາ? ____________________________________________________

**45** ລະບົບໃນພະຄຳພີເດີມທີ່ພວກປະໂລຫິດຖະຫວາຍສັດເປັນເຄື່ອງບູຊາຊີ້ບອກເຖິງຫຍັງໃນພະຄຳພີໃໝ່? ______________________________________________________

**46** ໃນພະຄຳພີເດີມມີປະໂລຫິດຫຼາຍອົງທີ່ຖະຫວາຍສັດບູຊາຫຼາຍຕົວ. ໃນເຮັບເລີ 9:11 ປະໂລຫິດທີ່ຖະຫວາຍເຄື່ອງບູ ຊາອັນສົມບູນເປັນການສິ້ນສຸດຄືໃຜ? ____________________

**47** ກ. ເຄື່ອງບູຊາເຫຼົ່ານັ້ນໃນພະຄຳພີເດີມ ມີຈຸດປະສົງແຕ່ປະການດຽວຄື ຈະຊີ້ບອກເຖິງການບູຊາທີ່ສົມບູນຄື ການບູຊາໃຜ? ________________________________________
ຂ. ຍັງອີກໜ້າທີ່ຂອງປະໂລຫິດໃນພະຄຳພີເດີມ ມີແຕ່ຊີ້ບອກເຖິງປະໂລຫິດອົງແທ້ຈິງແລະສູງສຸດຄືໃຜ? ______________________________________________
ຄ. ພວກປະໂລຫິດຢິວໃນພະຄຳພີເດີມ ບູຊາສັດໄປຢູ່ເລື້ອຍໆ ວັນຕໍ່ວັນ ປີຕໍ່ປີ ສັດຕະວັດຕໍ່ສັດຕະວັດແຕ່ບໍ່ສຳເລັດຈັກ ເທື່ອ. ພະເຢຊູຖະຫວາຍຕົວເປັນເຄື່ອງບູຊາຈັກເທື່ອ? ________
ງ. ແມ່ນການບູຊາຂອງໃຜທີ່ລຶບລ້າງບາບເປັນການສິ້ນສຸດ? ____________________
ຈ. ດັ່ງນັ້ນ ພະອົງຍົກຫຍັງໃຫ້ມະນຸດສະໂລກ? ____________________________

**48** ທ່ານສັງເກດບໍ່ວ່າ ໃນຄຳອະທິບາຍເລື່ອງໜ້າທີ່ການບູຊາຈາກພະຄຳພີເດີມເຮົາມັກອ້າງເຖິງພະທຳໜຶ່ງໃນພະຄຳ ພີໃໝ່ຫຼາຍ ຄືພະທຳໃດ? ______________________________

**49** ເນື່ອງຈາກທີ່ເຮົາໄດ້ຮັບການໄຖ່ຄືນມາແລ້ວ

ກ. ເຮົາມີເຈົ້າຂອງໃໝ່ຄືໃຜ? ______________________________

ຂ. ເຮົາມີຂໍ້ຜູກມັດຢ່າງໃດຕໍ່ພະອົງ? ______________________________

**50** ລະບົບການບູຊາແລະໜ້າທີ່ຂອງປະໂລຫິດທັງໝົດໃນພະຄຳພີເດີມຮວມເປັນສັນຍາລັກ. ເບິ່ງຈາກແງ່ທີສາມ ເລື່ອງຄວາມຕາຍຂອງພະອົງທີ່ໄມ້ກາງແຂນຄື:

______________ ຊົງຖະຫວາຍຕົວເປັນເຄື່ອງ ______________________. (ຕື່ມຄວາມ)

**51** ໃນບ່ອນຫວ່າງຕໍ່ໄປນີ້ ໃຫ້ທ່ານຂຽນສາມແງ່ທີ່ເຮົາເຂົ້າໃຈຄວາມຕາຍຂອງພະອົງທີ່ໄມ້ກາງແຂນ

ກ. ພະເຢຊູ ______________________________

ຂ. ພະເຢຊູ ______________________________

ຄ. ພະເຢຊູ ______________________________

> ໃຫ້ທ່ານເປີດໜ້າປົກ ບົດທີ 23 ຢູ່ ແລ້ວຂຽນສາເຫດທີ່ພະອົງຕ້ອງຕາຍ
> ໃຫ້ຖືກກັບ "ກ" "ຄ" ແລະ "ງ" (ຮູບ "ຂ" ຍັງເທື່ອ)

*ເຮົາຈະຮຽນເລື່ອງເຫດທີ່ພະເຢຊູຕ້ອງຕາຍ ໃນບົດທີ 24 ຕໍ່ໄປ*

*ໃຫ້ທ່ານເປີດເສັງບົດທີ 23 ກ່ອນ*

## ຄຳຕອບ:

**1** *ກ. ຮູບ ຄ ຂ. ພະເຢຊູ*

**2** *ກ. ຜູ້ປົກຄອງ ແລະອຳນາດທັງຫຼາຍ ຂ. ຊະນະໂດຍຄວາມຕາຍ (ທີ່ໄມ້ກາງແຂນ)*

**3** *ທີ່ພະອົງຕາຍ*

**4** *ຄ ຖືກ*

**5** *ກ. ໄຊຊະນະ ຂ. ປົກຄອງ... ອຳນາດ*

**6** *ຄວາມຕາຍ... ທຳລາຍ... ພະຍາມານ.*

**7** *ຕາຍທີ່ໄມ້ກາງແຂນ*

**8** *ກ. ພະເຢຊູ ຂ. ຜູ້ປົກຄອງແລະອຳນາດທັງຫຼາຍ ຄ. ພະເຈົາ*
*ງ. ຕາຍທີ່ໄມ້ກາງແຂນ*

**9** *ກ. ຮູບ ງ ຂ. ຕາຍທີ່ໄມ້ກາງແຂນ*

**10** *ເປັນທາດ*

**11** *ກ. ຜູ້ປົກຄອງແລະອຳນາດທັງຫຼາຍ ຂ. ການເປັນທາດ*

**ຄໍາຕອບ (ຕໍ່):**

**12** *ຫວັງວ່າຈະມີຄົນເສຍຄ່າໄຖ່ເຂົາຄືນ*

**13** *ຂ້ອຍຂ້າຂອງຄວາມບາບ*

**14** *ກ ຖືກ*

**15** *ຄ່າໄຖ່ຄົນຈໍານວນຫຼາຍ*

**16** *ກ. ບໍ່ໄຖ່ດ້ວຍສິ່ງຂອງທີ່ເສື່ອມສູນໄປຄືເງິນຫຼືຄໍາ ຂ. ພະໂລຫິດອັນຊົງມີຄ່າຂອງພະຄຼິດ ຄ. ເລືອດລູກແກະທີ່ບໍ່ມີຕໍາໜິຫຼືຮອຍດ່າງ*

**17** *ຂ ຖືກ*

**18** *ກ. ທາດຂອງບາບ ຂ. ພະໂລຫິດຂອງພະອົງ (ການສິ້ນພະຊົນ)*

**19** *ກ. ເປັນທາດຂອງບາບ ຂ. ໄຖ່ເຮົາໃຫ້ພົ້ນ*

**20** *ກ. ຄວາມຜິດບາບ ຂ. ຂອງຄວາມຊອບທໍາ ສ. ຮ່າງກາຍ*

**21** *ກ. ເສລີພາບຈາກຄວາມຜິດບາບ ຂ. ຂອງຄວາມຊອບທໍາ*

**22** *ກ. ພະເຈົ້າ ຂ. ພະເຢຊູຄຼິດ ຄ. ເສຍຊີວິດເປັນຄ່າໄຖ່*

**23** *ເຮັດການດີ*

**24** *ກ. ບໍ່ ຂ. ພະເຈົ້າ ຄ. ລາຄາສູງ ງ. ໂລຫິດຂອງພະອົງ ຈ. ພະເຈົ້າ ສ. ຮ່າງກາຍ*

**25** *ກ. ຄວາມບາບ ຂ. ຄວາມບາບ ຄ. ພະເຢຊູ ງ. ຕ້ອງຮັບໃຊ້ພະອົງ*

**26** *ກ ຖືກ*

**27** *ກ. ເຮົາຕ້ອງຮັບໃຊ້ພະອົງ ຂ. ໄຖ່... ຂ້ອຍຂ້າ*

**28** *ກ. ຊະນະ ຂ. ເຮົາຄືນ*

**29** *ກ. ຮູບ ກ ຂ. ບູຊາ*

**30** *ຖວາຍ*

**31** *ກ. ໄຊຊະນະ ຂ. ໄຖ່ເຮົາຄືນ ຄ. ຖວາຍ... ບູຊາ*

**32** *ບໍ່ມີການອະໄພ*

**33** *ບໍ່ໄດ້*

**34** *ພະເຢຊູ*

**35** *ພະອົງເອງ*

**36** *ຂ ຖືກ*

**37** *ກ. ເທື່ອດຽວ ຂ. ສິ້ນສຸດ*

**38** *ເບື້ອງຂວາຂອງພະເຈົ້າ*

**39** *ກ ຖືກ*

**40** *ຄ ຖືກ*

**41** *ສົມບູນ (ບໍລິບູນ)*

**ຄໍາຕອບ (ຕໍ່):**

**42** *ສໍາເລັດແລ້ວ*

**43** *ທີ່ຈະຮັບໃຊ້ພະອົງ*

**44** *ຄວາມລອດພົ້ນຢ່າງສົມບູນ*

**45** *ທີ່ພະເຢຊູຖະຫວາຍຕົວເປັນເຄື່ອງບູຊາແທນເຮົາ. (ຄໍາຄ້າຍຄືກັນກໍໄດ້)*

**46** *ພະເຢຊູ*

**47** *ກ. ພະເຢຊູ ຂ. ພະເຢຊູ ຄ. ເທື່ອດຽວ ງ. ພະເຢຊູ*
*ຈ. ຄວາມລອດພົ້ນຢ່າງສົມບູນ*

**48** *ເຮັບເລີ*

**49** *ກ. ພະເຢຊູ ຂ. ຕ້ອງຮັບໃຊ້ພະອົງ*

**50** *ພະເຢຊູ... ບູຊາ*

**51** *ກ. ໄຊຊະນະ ຂ. ໄຖ່ເຮົາຄືນ ຄ. ຖະຫວາຍຕົວເປັນເຄື່ອງບູຊາ*